Special Economic zone, Lectures Twelfth: Rights and obligations of investors

1. **ສິດ ແລະ ພັນທະຂອງຜູ້ລົງທຶນ**

   **1.1 ສິດຂອງຜູ້ລົງທຶນ.**

   ຜູ້ລົງທຶນທີ່ລົງທຶນໃນ ສປປລາວ ມີສິດດັ່ງນີ້:

1) ລົງທຶນໃນທຸກຂະແໜງການ ແລະ ທຸກເຂດການລົງທຶນທີ່ບໍ່ຫວງຫ້າມຕາມກົດໝາຍ ຂອງ ສປປ ລາວ;
2) ລົງທຶນຕາມປະເພດ, ຮູບການ ແລະ ຮູບແບບວິສະຫະກິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;
3) ຂໍສຳປະທານໂຄງການນຳລັດຖະບານ ຫຼື ອົງການປົກຄອງແຂວງ, ນະຄອນຄອງຫຼວງ ຕາມແຕ່ລະກໍລະນີ ເພື່ອພັດທະນາໂຄງການໃດໜຶ່ງ;
4) ຂໍສ້າງຕັ້ງຫ້ອງການຜູ້ຕ່າງໜ້າ ຫຼື ສາຂາຂອງຕົນຢູ່ ສປປລາວ;
5) ຂໍປ່ຽນວັດຖຸປະສົງ ຫຼື ກິດຈະການການລົງທຶນ ໃນກໍລະນີທີ່ການດຳເນີນທຸລະກິດຂອງຕົນ ຫາກບໍ່ມີປະສິດທິຜົນ ເນື່ອງຈາກການປ່ຽນແປງທາງດ້ານນະໂຍບາຍ, ກົດໝາຍ ແລະ ລະບຽບການ;
6) ໄດ້ຮັບການປົກປ້ອງດ້ານຕ່າງໆ ຈາກລັດ, ສິດ ແລະ ຜົນປະໂຫຍດອັນຊອບທຳ ທີ່ໄດ້ມາຈາກການລົງທຶນຂອງຕົນ;
7) ໄດ້ຮັບການປົກປ້ອງດ້ານຕ່າງໆ ຈາກລັດ, ສິດ ແລະ ຜົນປະໂຫຍດອັນຊອບທຳ ທີ່ໄດ້ມາຈາກການລົງທຶນຂອງຕົນ;
8) ໄດ້ຮັບການອຳນວຍຄວາມສະດວກໃນດ້ານຕ່າງໆ ໃນການລົງທຶນຂອງຕົນ;
9) ໄດ້ຮັບຜົນປະໂຫຍດຈາກການເຊົ່າ ຫຼື ການສຳປະທານ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ
10) ສຳລັບຜູ້ເຊົ່າ, ສຳປະທານທີ່ດິນ ມີສິດໃຊ້ທີ່ດິນຕາມອາຍຸເຊົ່າ ຫຼື ສຳປະທານ, ໃຫ້ສືບທອດສັນຍາເຊົ່າທີ່ດິນຕາມອາຍຸສັນຍາ ແລະ ຕາມກົດໝາຍ ແລະ ລະບຽບການ;
11) ເປັນເຈົ້າກຳມະສິດຕໍ່ຊັບສິນຂອງຕົນ ລວມທັງຕຶກ, ອາຄານ ຫຼື ສິ່ງປຸກວ້າງໃນທີ່ດິນທີ່ໄດ້ຮັບການສຳປະທານ, ມີສິດຖອນກຳມະສິດໃຫ້ຄົນພາຍໃນ ຫຼື ຕ່າງປະເທດ ຕາມກົດໝາຍ ແລະ ລະບຽບການ;
12) ເປີດບັນຊີ ເປັນເງິນກີບ ຫຼື ເງິນຕາຕ່າງປະເທດ ຢູ່ທະນາຄານທີ່ຕັ້ງຢູ່ ສປປລາວ;
13) ຍື່ນຄຳຮ້ອງທຸກຕໍ່ອົງການທີ່ກ່ຽວຂ້ອງ ໃນກໍລະນີທີ່ເຫັນວ່າຕົນ ຖືກອັບປະໂຫຍດໃນການລົງທຶນ;
14) ໄດ້ຮັບສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

    ນອກຈາກນີ້, ຜູ້ລົງທຶນ ຍັງມີສິດໃນການຄຸ້ມຄອງ, ບໍລິຫານກິດຈະການການລົງທຶນຂອງຕົນ, ຊຶ່ງສິດໃນການຄຸ້ມຄອງ ແລະ ບໍລິຫານກິດຈະການຂອງຕົນມີດັ່ງນີ້:

    1) ວາງແຜນໃນການລົງທຶນ;
    2) ຈັດຫາ ແລະ ນຳໃຊ້ວັດຖຸປະກອນ, ພາຫະນະ, ກົນຈັກ ແລະ ເຕັກໂນໂລຊີຕ່າງໆ ເຂົ້າໃນການລົງທຶນ;
    3) ເຂົ້າເຖິງ ຕະຫຼາດ ພາຍໃນ ແລະ ຕ່າງປະເທດ;

4) ຄຸ້ມຄອງແຮງງານໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ມີຄວາມປອດໄພ ແລະ ມີຄວາມສະດວກໃນການເຄື່ອນໄຫວທຸລະກິດ;
5) ດຳເນີນກອງປະຊຸມ ເພື່ອປຶກສາຫາລື ກ່ຽວກັບການລົງທຶນ;
6) ມອບ ຫຼື ໂອນຮຸ້ນ ໃຫ້ຜູ້ລົງທຶນອື່ນ;
7) ສະເໜີຕໍ່ອົງການທີ່ກ່ຽວຂ້ອງ ເພື່ອພິຈາລະນາກ່ຽວກັບການຄວບ, ໂຈະ, ຍຸບເລີກ ຫຼື ປ່ຽນຮູບແບບວິສະຫະກິດຂອງຕົນ
8) ນຳໃຊ້ສິດອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ແລະ ຜູ້ລົງທຶນຍັງມີສິດໃນການວ່າຈ້າງແຮງງານດັ່ງນີ້:

1) ເຊັນສັນຍາວ່າຈ້າງແຮງງານກັບນັກວິຊາການ, ຜູ້ຊ່ຽວຊານ ເພື່ອເຂົ້າມາເຮັດວຽກ ໃນວິສະຫະກິດຂອງຕົນ. ໃນກໍລະນີ ກິດຈະການ ການລົງທຶນຫາກມີຄວາມຈຳເປັນ ນຳເຂົ້າຜູ້ອອກແຮງງານດ້ານຮ່າງການ ແລະ ມັນສະໝອງ ເກີນອັດຕາສ່ວນທີ່ໄດ້ກຳນົດໄວ້ໃນກົດໝາຍແຮງງານ ຜູ້ລົງທຶນມີສິດສະເໜີຕໍ່ ຫ້ອງການລົງທຶນບໍລິການການລົງທຶນປະຕູດຽວ ເພື່ອຄົ້ນຄ້ວາ ແລະ ນຳສະເໜີຕໍ່ຄະນະກຳມະການ ສົ່ງເສີມ ແລະ ຄຸ້ມຄອງການລົງທຶນພິຈາລະນາຕາມຄວາມເໝາະສົມ;
2) ສັບຊ້ອນ, ຈັດວາງຜູ້ອອກແຮງງານເຂົ້າໃນຕຳແໜ່ງງານຕ່າງໆ ຕາມຄວາມຮຽກຮ້ອງຕ້ອງການຂອງວິສະຫະກິດຕົນ;
3) ປະຕິບັດນະໂຍບາຍ ຫຼື ມາດຕະການຕໍ່ຜູ້ອອກແຮງງານ ຢ່າງຖືກຕ້ອງຕາມກົດໝາຍ;
4) ນຳໃຊ້ສິດອື່ນ ຕາມທີໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຂອງ ສປປ ລາວ.

ນອກຈາກນີ້, ຜູ້ລົງທຶນຕ່າງປະເທດ ພ້ອມດ້ວຍ ສະມາຊິກຄອບຄົວ ມີສິດອາໄສຢູ່ດິນແດນຂອງ ສປປ ລາວ ຕາມໄລຍະເວລາຂອງການລົງທຶນ. ນັກວິຊາການ, ຜູ້ຊ່ຽວຊານຕ່າງປະເທດ ມີສິດອາໄສ ຢູ່ ສປປ ລາວ ຕາມສັຍາວ່າຈ້າງແຮງງານ.

ຜູ້ລົງທຶນຕ່າງປະເທດ ມີສິດສົ່ງທຶນ, ຊັບສິນ ແລະ ລາຍຮັບຂອງຕົນ ເປັນຕົ້ນກຳໄລຈາກການລົງທຶນ ເງິນ ແລະ ຊັບສິນຕ່າງໆ ທີເປັນກຳມະສິດສ່ວນຕົວ ຫຼື ຂອງວິສະຫະກິດ ອອກໄປຕ່າງປະເທດ ໂດຍຜ່ານທະນາຄານທີຕັ້ງຢູ່ ສປປລາວ ແລະ ການຈັດຕັ້ງ ລັດທີ່ກ່ຽວຂ້ອງ ພາຍຫຼັງທີໄດ້ປະຕິບັດພັນທະ ດ້ານພາສີອາກອນ ແລະ ຄ່າທຳນຽມ ໃຫ້ລັດຢ່າງຄົບຖ້ວນ ຕາມທີໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ.

ຊຶ່ງການໂອນຊັບສິນທີ່ເປັນທຶນ ແລະ/ຫຼື ເງິນປະກອບດ້ວຍ:

1) ທຶນທີ່ຜ່ານການຢັ້ງຢືນ ຂອງທະນາຄານ ແຫ່ງ ສປປ ລາວ;
2) ກຳໄລ, ເງິນປັນຜົນ, ລາຍຮັບຈາກການເຊົ່າລິຂະສິດ, ຊັບສິນທາງປັນຍາ, ລາຍຮັບຈາກການບໍລິການດ້ານເຕັກນິກວິຊາການ, ດອກເບ້ຍ ແລະ ລາຍໄດ້ອື່ນ ຈາກການລົງທຶນ;
3) ເງິນທີໄດ້ມາຈາກການຂາຍທຸລະກິດ, ການຂາຍກິດຈະການ, ຍົກເລີກກິດຈະການທັງໝົດ ຫຼື ສ່ວນໃດໜຶ່ງ;

4) ເງິນທີ່ໄດ້ຮັບຈາກການຊໍາລະພາຍໃຕ້ສັນຍາໃດໜຶ່ງ ຊຶ່ງລວມທັງສັນຍາເງິນກູ້, ເງິນທີ່ໄດ້ຈາກຜົນການຕັດສິນຈາກທຸກການໄກ່ເກ່ຍຂໍ້ຂັດແຍ້ງ ຫຼື ການຕັດສິນຈາກສານ ທີ່ອາດພົວພັນ ຫຼື ບໍ່ພົວພັນກັບກິດຈະການ ການລົງທຶນ;
5) ເງິນສົດເຊີຍ ຫຼື ເງິນຊໍາລະອື່ນໆ ທີ່ໄດ້ຮັບກ່ອນການຮິບຊັບ ຫຼື ການຫັນເປັນຊັບສິນຂອງລັດ;
6) ລາຍໄດ້ ແລະ ເງິນຕອບແທນຂອງພະນັກງານຕ່າງປະເທດ ທີ່ຖືກຈ້າງເຮັດວຽກຢ່າງຖືກຕ້ອງຕາມກົດໝາຍ[1].

**1.2 ພັນທະຂອງຜູ້ລົງທຶນ.**

ຜູ້ລົງທຶນມີພັນທະຕໍ່ລັດດັ່ງນີ້:

1) ເສຍພາສີ, ອາກອນ, ຄ່າທໍານຽມ ແລະ ຄ່າບໍລິການຕ່າງໆ ຢ່າງຄົບຖ້ວນ ແລະ ທັນເວລາ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2) ຖືບັນຊີຕາມກົດໝາຍວ່າດ້ວຍການບັນຊີ ຂອງ ສປປ ລາວ, ໃນກໍລະນີຈໍາເປັນ ກໍສາມາດນໍາໃຊ້ລະບົບບັນຊີສາກົນ ແຕ່ຕ້ອງໄດ້ຮັບການເຫັນດີ ຈາກຂະແໜງການເງິນ ຂອງ ສ ປປ ລາວ;
3) ໃຫ້ຄວາມຮ່ວມມື ແລະ ປະສານງານ ເປັນຢ່າງດີກັບອົງການປົກຄອງທ້ອງຖິ່ນ ໃນການເຄື່ອນໄຫວວຽກງານທຸລະກິດ;
4) ສົ່ງເສີມການນໍາໃຊ້ແຮງງານລາວ ໂດຍສະເພາະແຮງງານຍິງ ແລະ ຊົນເຜົ່າ; ເອົາໃຈໃສ່ການພັດທະນາສີມືແຮງງານ,ຍົກລະດັບ ວິຊາສະເພາະ ແລະ ຖ່າຍທອດເຕັກໂນໂລຊີໃຫ້ແຮງງານລາວ;
5) ປະກອບສ່ວນທາງດ້ານງົບປະມານໃນວຽກງານຕິດຕາມ, ກວດກາໂຄງການລົງທຶນ;
6) ສະຫຼຸບລາຍງານ ການດໍາເນີນທຸລະກິດຂອງຕົນ ປະຈໍາ ສາມເດືອນ, ຫົກເດືອນ ແລະ ປະຈໍາປີ ຕໍ່ຫ້ອງການ ການບໍລິການ ການລົງທຶນປະຕູດຽວ ແລະ ຂະແໜງການທີ່ກ່ຽວຂ້ອງ;
7) ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ນອກຈາກນີ້, ຜູ້ລົງທຶນຍັງຕ້ອງມີ ພັນທະດ້ານສັງຄົມ ດັ່ງນີ້:**

1) ປະຕິບັດລະບອບປະກັນສັງຄົມ ແລະ ປະກັນໄພຕໍ່ຜູ້ອອກແຮງງານ ໃນວິສະຫະກິດຂອງຕົນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2) ອໍານວຍຄວາມສະດວກໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການຈັດຕັ້ງມະຫາຊົນ ໃນວິສະຫະກິດຂອງຕົນ ໂດຍສະເພາະ ແມ່ນອົງການຈັດຕັ້ງກໍາມະບານ;
3) ເຄົາລົບ,ນັບຖືຮີດຄອງປະເພນີ ແລະ ວັດທະນາທໍາອັນດີງາມຂອງທ້ອງຖິ່ນ;
4) ທົດແທນຄ່າເສຍຫາຍໃຫ້ຜູ້ທີ່ໄດ້ຮັບຜົນກະທົບ ຈາກການດໍາເນີນທຸລະກິດຂອງຕົນ;
5) ປະກອບສ່ວນຊຸກຍູ້, ສົ່ງເສີມທຸລະກິດພາຍໃນ, ການແກ້ໄຂ ຄວາມທຸກຍາກຂອງປະຊາຊົນ ແລະ ພັດທະນາທ້ອງຖິ່ນໃນເຂດໂຄງການຂອງຕົນ;
6) ປະກອບສ່ວນທາງດ້ານງົບປະມານ ໃນວຽກງານພັດທະນາສັງຄົມ;

[1] ກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ ສະບັບປັບປຸງ, ລົງວັນທີ 14/ ສພຊ, ລົງວັນທີ 17 ພະຈິກ 2016, ພາກທີ VI ໝວດທີ 1, ມາດຕາ 67-71.

7) ປະຕິບັດພັນທະອື່ນ ຕາມທີໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ພ້ອມດຽວກັນນີ້ ກໍ່ຕ້ອງໄດ້ປະຕິບັດພັນທະດ້ານສິ່ງແວດລ້ອມດັ່ງນີ້:

1) ປະຕິບັດພັນທະດ້ານສິ່ງແວດລ້ອມຢ່າງເຂັ້ງຄັດ, ສົ່ງເສີມການພັດທະນາ ແລະ ເຕີບໂຕແບບສີຂຽວ, ຖືສຳຄັນການປົກປັກຮັກສາສະພາບແວດລ້ອມ ຕາມກົດໝາຍ ແລະ ລະບຽບການ;
2) ໃນກໍລະນີ ເກີດບັນຫາດ້ານສິ່ງແວດລ້ອມ ຜູ້ລົງທຶນ ມີພັນທະປະຕິບັດມາດຕະການທີຈຳເປັນ ເພື່ອແກ້ໄຂສະພາບການດັ່ງກ່າວ ຢ່າງທັນການ ຕາມກົດໝາຍ ແລະ ລະບຽບການ;
3) ປະຕິບັດພັນທະດ້ານ ສິ່ງແວດລ້ອມ ຕາມສົນທິສັນຍາ ຫຼື ສັນຍາສາກົນ ທີ ສປປ ລາວ ເປັນພາຄີ; ປະກອບສ່ວນທາງດ້ານງົບປະມານໃນວຽກງານສິ່ງແວດລ້ອມ;
4) ປະຕິບັດພັນທະອື່ນ ຕາມທີໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ[2].

ນອກຈາກນີ້, ຜູ້ລົງທຶນພາຍໃນທີອອກໄປລົງທຶນຢູ່ຕ່າງປະເທດ ແມ່ນ ມີສິດ ແລະ ປະຕິບັດຕາມພັນທະດັ່ງນີ້:

1) ນຳເງິນ ແລະ ຊັບສິນອອກໄປລົງທຶນຢູ່ຕ່າງປະເທດ ແລະ ກັບຄືນປະເທດ ພາຍຫຼັງທີໄດ້ປະຕິບັດພັນທະຕາມກົດໝາຍ ແລະ ລະບຽບການ ຂອງປະເທດ ທີຕົນລົງທຶນຢູ່;
2) ນຳເອົາຜົນກຳໄລ ແລະ ລາຍຮັບ ຈາກການດຳເນີນທຸລະກິດ ກັບຄືນປະເທດ;
3) ໄດ້ຮັບການອຳນວຍຄວາມສະດວກ ແລະ ນະໂຍບາຍຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;
4) ຈ້າງແຮງງານລາວ ເພື່ອເຮັດວຽກຢູ່ ວິສະຫະກິດຂອງຕົນຢູ່ຕ່າງປະເທດ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຂອງ ສປປ ລາວ ແລະ ຂອງປະເທດທີຕົນໄປລົງທຶນ.

ແລະ ຜູ້ລົງທຶນພາຍໃນທີອອກໄປລົງທຶນຢູ່ຕ່າງປະເທດ ມີພັນທະດັ່ງນີ້:

1) ປະຕິບັດຕາມກົດໝາຍ ແລະ ລະບຽບການ ຂອງປະເທດທີຕົນອອກໄປລົງທຶນ;
2) ລາຍງານດ້ານການເງິນ ແລະ ການດຳເນີນທຸລະກິດຂອງຕົນ ຕໍ່ຫ້ອງການບໍລິການ ການລົງທຶນປະຕູດຽວ ເພື່ອແຈ້ງໃຫ້ກະຊວງການເງິນ ແລະ ທະນາຄານແຫ່ງ ສປປລາວ. ພາຍຫຼັງສິ້ນສຸດການລົງທຶນຢູ່ຕ່າງປະເທດ ສາມາດນຳທຶນ ແລະ ຊັບສິນກັບຄືນປະເທດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ຜູ້ລົງທຶນ ທີ່ລົງທຶນໃນ ສປປ ລາວ ໂດຍຖືກຕ້ອງຕາມ ລະບຽບກົດໝາຍຈະໄດ້ ຮັບນະໂຍບາຍ ແລະ ໄດ້ຮັບສິດ ແລະ ປະຕບັດພັນທະຕາມທີໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ບໍ່ວ່າຜູ້ລົງທຶນ ໃນກິດຈະການສຳປະທານ, ກິດຈະການທົ່ວໄປ ທີຢູ່ໃນ ຫຼື ນອກເຂດເສດຖະກິດພິເສດ ກໍ່ຈະໄດ້ຮັບສິດ ແລະ ການປົກປ້ອງການລົງທຶນຕາມລະບຽບການ. ສະເພາະຜູ້ລົງທຶນຢູ່ໃນເຂດເສດຖະກິດພິເສດ ກໍາຈະໄດ້ຮັບນະໂຍບາຍສົ່ງເສີມພິເສດ, ຊຶ່ງແຕ່ລະເຂດເສດຖະກິດພິເສດແມ່ນມີນະໂຍບາຍສົ່ງເົມທີ່ແຕກຕ່າງກັນ.

---

[2] ກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ ສະບັບປັບປຸງ, ລົງວັນທີ 14/ ສພຊ, ລົງວັນທີ 17 ພະຈິກ 2016, ພາກທີ VI ໝວດທີ 2, ມາດຕາ 72-74

ແນວໃດກໍ່ຕາມ ຜູ້ລົງທຶນທີ່ລົງທຶນໃນ ສປປ ລາວ ຈະໄດ້ຮັບສິດ ແລະ ປະຕິບັດຕາມ ກົດໝາຍ, ລະບຽບການ ແລະ ສົນທິສັນຍາທີ່ ສປປ ລາວ ເປັນພາຄີ.

**ເອກະສານອ້າງອີງ**


1. ກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ ສະບັບປັບປຸງ, ລົງວັນທີ 14/ ສພຊ, ລົງວັນທີ 17 ພະຈິກ 2016, ພາກທີ VI ໝວດທີ 1, ມາດຕາ 67-71.
2. ກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ ສະບັບປັບປຸງ, ລົງວັນທີ 14/ ສພຊ, ລົງວັນທີ 17 ພະຈິກ 2016, ພາກທີ VI ໝວດທີ 2, ມາດຕາ 72-74